3. ສອງຝ່າຍ ສືບຕໍ່ໂຄສະນາເຜີຍແຜ່, ສຶກສາອົບຮົມ, ກ່ຽວກັບສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ຫວຽດນາມ-ລາວ, ລາວ-ຫວຽດນາມ ໃຫ້ແກ່ປະຊາຊົນ ຮັບຮູ້, ໂດຍສະເພາະແມ່ນຄົນຮຸ່ນໜຸ່ມສອງປະເທດ.

4. ສອງຝ່າຍ ຈັດຕັ້ງຜັນຂະຫຍາຍຢ່າງມີປະສິດທິຜົນ ກ່ຽວກັບ ການດັດແກ້ຂໍ້ຕົກລົງ ວ່າດ້ວຍຍຸດທະສາດການຮ່ວມມື ລະຫວ່າງ ຫວຽດນາມ ແລະ ລາວ ຢູ່ສອງແຂວງ ທິວພັນ ແລະ ຊຽງຂວາງ ຮອດປີ 2020.

5. ສອງຝ່າຍ ປະສານສົມທົບກັນແກ້ໄຂບັນຫາຫຍຸ້ງຍາກ, ຂໍ້ຄອງຄາຕ່າງໆ ທີ່ເກີດຂຶ້ນ ຢ່າງທັນການ ໃນການພົວພັນສອງປະເທດ ບົນຈິດໃຈສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານ ຫວຽດນາມ-ລາວ; ສ້າງເງື່ອນໄຂສະດວກໃຫ້ແກ່ພົນລະເມືອງຂອງຕົນ ທີ່ດໍາລົງຊີວິດ, ທໍາມາຫາກິນຖືກຕ້ອງຕາມກົດໝາຍ ຢູ່ອີກປະເທດໜຶ່ງ; ເອົາໃຈໃສ່ແກ້ໄຂກໍລະນີພົນລະເມືອງ



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn
09869708

ລາວ ຕ້ອງການສັນຊາດຫວຽດນາມ ແລະ ພົນລະເມືອງຫວຽດນາມ ຕ້ອງການສັນຊາດລາວ; ຈັດຕັ້ງປະຕິບັດເປັນຢ່າງດີ ຕໍ່ກັບສັນຍາ ວ່າດ້ວຍຊາວຕ່າງດ້າວ ລະຫວ່າງ ສອງປະເທດ.

6. ສອງຝ່າຍ ສົມທົບກັນຈັດຕັ້ງເປັນຢ່າງດີ ກ່ຽວກັບການສ້າງກິດຈະກຳສຳຄັນຕ່າງໆ ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 55 ປີ ແລະວັນເຊັນສົນທິສັນຍາ ວ່າດ້ວຍມິດຕະພາບ ແລະ ການຮ່ວມມື ຄົບຮອບ 40 ປີ ລະຫວ່າງ ຫວຽດນາມ ແລະ ລາວ.

## ມາດຕາ 2
## ການຮ່ວມມືດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

1. ສອງຝ່າຍ ຮີບຮ້ອນເຮັດສຳເລັດບັນດາຂັ້ນຕອນເອກະສານພາຍໃນ ແລະ ຕ່າງປະເທດ ເພື່ອໂຄສະນາເຜີຍແຜ່ ແລະຈັດຕັ້ງປະຕິບັດສັນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນຫວຽດນາມ-ລາວ ແລະ ອະນຸສັນຍາ ກ່ຽວກັບເສັ້ນຊາຍແດນ ແລະ ຫລັກໝາຍຊາຍແດນປະເທດຫວຽດນາມ-ລາວ ຢ່າງມີປະສິດທິຜົນ.

2. ສອງຝ່າຍ ສືບຕໍ່ຮັກສາແລກປ່ຽນຂໍ້ມູນຂ່າວສານ, ຮ່ວມມືກັນຢ່າງແໜ້ນແຟ້ນ ໃນການຮັບປະກັນຄວາມສະຫງົບ, ສ້າງເສັ້ນຊາຍແດນຫວຽດນາມ-ລາວ ໃຫ້ມີສະຖຽນລະພາບ ແລະ ພັດທະນາຮອບດ້ານ; ຕໍ່ສູ້ຕ້ານການເຄື່ອນໄຫວຂອງບັນດາອິດທິກຳລັງລັງປະປັກ ທີ່ສວຍໃຊ້ບັນຫາສາດສະໜາ, ຊົນເຜົ່າ; ທັບມ້າງການແບ່ງແຍກສາຍພົວພັນ ລະຫວ່າງ ສອງປະເທດ. ສອງຝ່າຍ ສູ້ຊົນໃຫ້ສຳເລັດ 02 ໂຄງການຮ່ວມມືພັດທະນາຈຸດສຸມ (ບ້ານ, ກຸ່ມບ້ານພັດທະນາ) ຢູ່ບໍລິເວນຊາຍແດນ ລາວ-ຫວຽດນາມ ເພື່ອມອບ-ຮັບ ແລະ ສຳເລັດສະຫຼຸບຕີລາຄາ ກ່ຽວກັບການກໍ່ສ້າງ 15 ກຸ່ມບ້ານພັດທະນາຮອບດ້ານ ໃນປີ 2017 ແລະປຶກສາຫາລືແລກປ່ຽນ ກ່ຽວກັບທິດທາງການຮ່ວມມື ໃນຕໍ່ໜ້າ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງສະພາບການໃໝ່; ປະສານສົມທົບກັນຈັດຕັ້ງປະຕິບັດບຳລຸງຮັກສາ, ບູລະນະສ້ອມແປງ, ປັບປຸງ ແລະ ເສີມຂະຫຍາຍບົດບາດຂອງບັນດາໂຄງການ ທີ່ສຳເລັດ ເປັນຢ່າງດີ.

3. ສອງຝ່າຍ ເພີ່ມທະວີຈັດຕັ້ງການລາດຕະເວນ, ຕິດຕາມກວດກາຮ່ວມກັນ ຢູ່ບັນດາຄູ່ດ່ານ; ແລກປ່ຽນບົດຮຽນໃນການສ້າງກຳລັງ, ຝຶກແອບ, ຊ້ອມຮົບປ້ອງກັນຈັ້ງທ່າ, ສົມທົບ, ປະສົມປະສານລະຫວ່າງບັນດາກົມກອງທະຫານຂອງສອງປະເທດ ປະຈຳຢູ່ເຂດຊາຍແດນຕິດຈອດກັນ ເພື່ອຄຸ້ມຄອງ ແລະ ປ້ອງກັນຄວາມສະຫງົບປອດໄພເຂດຊາຍແດນ; ຕ້ານອາດສະຍາກຳຂ້າມຊາດ, ສະກັດກັ້ນ ແລະແກ້ໄຂບັນຫາການຂຸດຄົ້ນຊັບພະຍາກອນທຳມະຊາດ ທີ່ຜິດກົດໝາຍ; ການຄ້າຂາຍເຖື່ອນ, ການຂົນສົ່ງຫາດຢາເສບຕິດ, ການຄ້າມະນຸດ ແລະ ບັນດາປະກົດການຫຍໍ້ທໍ້ອື່ນໆທີ່ເກີດຂຶ້ນ ຢູ່ບໍລິເວນຊາຍແດນຂອງສອງປະເທດ.

4. ສອງຝ່າຍ ຊຸກຍູ້ເຈລະຈາ ເພື່ອລົງນາມໃນສົນທິສັນຍາ ວ່າດ້ວຍການປ້ອງກັນຂ່າວລັບ; ສົນທິສັນຍາ ວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ; ສົນທິສັນຍາ ວ່າດ້ວຍການສົ່ງຕົວນັກໂທດ ທີ່ຖືກສານຕັດສິນຄະດີຈຳຄຸກ ລະຫວ່າງ ສອງປະເທດ.

5. ສອງຝ່າຍ ສືບຕໍ່ສົມທົບກັນຈັດຕັ້ງຜັນຂະຫຍາຍແຜນງານຂອງລັດຖະບານ ກ່ຽວກັບການແກ້ໄຂບັນຫາຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ ແລະ ແຕ່ງດອງບໍ່ຖືກຕ້ອງຕາມລະບຽບ ຢູ່ບໍລິເວນຊາຍແດນ ຢ່າງມີປະສິດທິຜົນ ພ້ອມທັງຮັບປະກັນ ໃຫ້ບັນລຸໄດ້ວັດຖຸປະສົງ ແລະ ເປົ້າໝາຍທີ່ວາງໄວ້.



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn
09869708

6. ສອງຝ່າຍ ປະສານສົມທົບກັນ ເພື່ອຮັບປະກັນຄວາມສະຫງົບປອດໄພ ໃຫ້ແກ່ບັນດາການຢ້ຽມຢາມ ແລະ ເຮັດວຽກ ເຊິ່ງກັນ ແລະ ກັນ ຂອງການນໍາຂັ້ນສູງສອງປະເທດ; ບັນດາການເຄື່ອນໄຫວສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 55 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ຫວຽດນາມ ຄົບຮອບ 40 ປີ.

7. ສອງຝ່າຍ ສືບຕໍ່ປະສານສົມທົບໃນການຊອກຫາ, ຂຸດຄົ້ນ ແລະ ເຄື່ອນຍ້າຍອັດຖິຂອງທະຫານອາສາສະໝັກຫວຽດນາມ ຢູ່ລາວ; ສ້າງອານຸສາວະລີ "ນໍ້າໃຈສາມັກຄີ ມິດຕະພາບ ລາວ-ຫວຽດນາມ" ຢູ່ແຂວງໄຊສົມບູນ, ສປປ ລາວ ໃຫ້ສໍາເລັດ ແລະ ເອົາເຂົ້າສູ່ການນໍາໃຊ້.

## ມາດຕາ 3
## ການຮ່ວມມືດ້ານເສດຖະກິດ

### 1. ດ້ານການລົງທຶນ:

ກ. ສອງຝ່າຍ ປະສານສົມທົບກັນຊຸກຍູ້ການລົງທຶນຂອງວິສາຫະກິດຫວຽດນາມ ຢູ່ລາວ ແລະ ການລົງທຶນຂອງວິສາຫະກິດລາວ ຢູ່ຫວຽດນາມ ໃຫ້ສອດຄ່ອງກັບທິດທາງການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະປະເທດ; ສ້າງເງື່ອນໄຂສະດວກໃຫ້ແກ່ວິສາຫະກິດຫວຽດນາມ ລົງທຶນໃນເຂດທີ່ມີຄວາມຫຍຸ້ງຍາກຂອງລາວ; ມີນະໂຍບາຍຊ່ວຍໜູນແທດຕົວຈິງ ບົນຈິດໃຈການພົວພັນແບບພິເສດ ລະຫວ່າງ ສອງປະເທດ ໃຫ້ແກ່ບັນດາວິສາຫະກິດ ໃນໄລຍະເບື້ອງຕົ້ນ ທີ່ມີຄວາມຫຍຸ້ງຍາກ.

ຂ. ສອງຝ່າຍ ສົມທົບກັນຈັດຕັ້ງກອງປະຊຸມຮ່ວມມືລົງທຶນ ລາວ-ຫວຽດນາມ ຢູ່ລາວ ໃນປີ 2017; ສືບຕໍ່ຈັດການພົບປະ ລະຫວ່າງ ການນໍາຂອງລັດຖະບານລາວ ກັບບັນດາຫົວໜ່ວຍວິສາຫະກິດຫວຽດນາມ.

ຄ. ສອງຝ່າຍ ປະສານສົມທົບກັນຈັດຕັ້ງການຕິດຕາມ, ກວດກາບັນດາໂຄງການລົງທຶນ ຂອງຫວຽດນາມ ຢູ່ລາວ; ຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາລົງທຶນ ທີ່ໄດ້ເຊັນກັນ; ໂຄສະນາເຜີຍແຜ່ບັນດາຂໍ້ກໍານົດ, ລະບຽບການ, ກົດໝາຍທີ່ກ່ຽວຂ້ອງເຖິງການລົງທຶນຂອງລາວ ແລະ ຫວຽດນາມ; ສືບຕໍ່ປັບປຸງ, ປຽບທຽບ ແລະ ແລກປ່ຽນຂໍ້ມູນການລົງທຶນ ຂອງວິສາຫະກິດຫວຽດນາມ ຢູ່ລາວ.

ງ. ຝ່າຍຫວຽດນາມ ສືບຕໍ່ສ້າງເງື່ອນໄຂສະດວກ ໃຫ້ຝ່າຍລາວ ເພື່ອສ້າງສາງພັກນໍ້າມັນ ແລະ ທໍ່ສົ່ງນໍ້າມັນ ຈາກທ່າເຮືອຮອນລາ (Hon La) ຫາ ແຂວງຄໍາມ່ວນ, ລາວ; ສອງຝ່າຍ ຮີບຮ້ອນສໍາເລັດເອກະສານ ເພື່ອລົງນາມໃນສັນຍາ ກ່ຽວກັບໂຄງການດັ່ງກ່າວ ໃນປີ 2017.

ຈ. ສອງຝ່າຍ ສົມທົບກັນສ້າງ ແລະ ເປັນເອກະພາບບັນດາມາດຕະການ, ວິທີການແກ້ໄຂຂໍ້ຫຍຸ້ງຍາກ ແລະ ຄົງຄ້າງ ໃນການປະຕິບັດໂຄງການແຮ່ເກືອກາລີ ຢູ່ແຂວງຄໍາມ່ວນ; ແກ້ໄຂຟື້ນຟູເຫດການທີ່ເກີດຂຶ້ນຢູ່ເຂື່ອນໄຟຟ້າເຊຂະໜານ 3 ຢ່າງຂາດຕົວ.

ສ. ມອບໃຫ້ກະຊວງແຜນການ ແລະ ການລົງທຶນສອງປະເທດ ເປັນເຈົ້າການ, ປະສານສົມທົບກັບບັນດາກະຊວງ, ຂະແໜງການ, ອົງການ ທີ່ກ່ຽວຂ້ອງ ເປັນເສນາທິການໃຫ້ແກ່ລັດຖະບານລາວ ສະເໜີບັນດາມາດຕະການ ເພື່ອປະຕິຮູບລະບົບຄຸ້ມຄອງ-ບໍລິຫານ ແນໃສ່ປັບປຸງສະພາບແວດລ້ອມຂອງການລົງທຶນ ກໍຄືການດໍາເນີນທຸລະກິດ ເພື່ອດຶງດູດການລົງທຶນຂອງຕ່າງປະເທດ, ໃນນັ້ນ ມີນັກລົງທຶນຂອງຫວຽດນາມ ເຂົ້າມາລົງທຶນ ຢູ່ໃນ ສປປ ລາວ.



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn
09869708

**2. ດ້ານການຄ້າ:**

ກ. ສອງຝ່າຍ ສູ້ຊົນເພື່ອຍົກມູນຄ່າການຄ້າຂາອອກ-ຂາເຂົ້າ ລະຫວ່າງ ສອງປະເທດ ເພີ່ມຂຶ້ນ 10% ທຽບໃສ່ປີ 2016.

ຂ. ສອງຝ່າຍ ປະສານສົມທົບກັນຈັດຕັ້ງເຜີຍແຜ່ເນື້ອໃນສັນຍາການຄ້າ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ທີ່ໄດ້ເຊັນກັນຄັ້ງວັນທີ 03 ມີນາ 2015 ແລະ ສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ທີ່ໄດ້ເຊັນກັນ ຄັ້ງວັນທີ 27 ມິຖຸນາ 2015 ຢ່າງມີປະສິດທິຜົນ; ສືບຕໍ່ໂຄສະນາ, ເຜີຍແຜ່ ຢ່າງທົ່ວເຖິງ ກ່ຽວກັບເນື້ອໃນຂອງສັນຍາສອງສະບັບທີ່ກ່າວມາຂ້າງເທິງນັ້ນ ໃຫ້ແກ່ບັນດາຫົວໜ່ວຍວິສາຫະກິດສອງປະເທດ ຮັບຊາບ.

ຄ. ໃນປີ 2017, ສອງຝ່າຍ ຕ້ອງສໍາເລັດການເຊັນສັນຍາ (ຫຼື ອານຸສັນຍາ) ກ່ຽວກັບການດັດແກ້ເພີ່ມເຕີມສັນຍາ ວ່າດ້ວຍສິນຄ້າຜ່ານແດນ ລາວ-ຫວຽດນາມ ທີ່ໄດ້ເຊັນກັນຄັ້ງວັນທີ 13 ເດືອນ 3 ປີ 2009.

ງ. ສອງຝ່າຍ ຈັດຕັ້ງປະຕິບັດບັນດາມາດຕະການ ເພື່ອຊຸກຍູ້ການຮ່ວມມືດ້ານການຄ້າ; ເພີ່ມທະວີບັນດາການເຄື່ອນໄຫວຊຸກຍູ້ການຄ້າ ລະຫວ່າງ ລາວ ແລະ ຫວຽດນາມ, ພ້ອມກັນນັ້ນ ກໍ່ສ້າງເງື່ອນໄຂສະດວກໃຫ້ແກ່ບັນດາວິສາຫະກິດຫວຽດນາມ ກໍ່ສ້າງສູນການຄ້າຕ່າງໆ ຢູ່ລາວ; ສະໜັບສະໜູນວິສາຫະກິດ ຊ່ວຍພັດທະນາເຄືອຂ່າຍການຄ້າ ຢູ່ຕະຫຼາດຂອງລາວ.

ຈ. ສອງຝ່າຍ ສົມທົບກັນຄົ້ນຄ້ວາ ແລະ ສ້າງໂຄງຮ່າງແຜນແມ່ບົດພັດທະນາການຄ້າ ລາວ-ຫວຽດນາມ ໄລຍະ 10 ປີ (2017-2026).

ສ. ສອງຝ່າຍ ປັບປຸງໃຫ້ສໍາເລັດແຜນແມ່ບົດພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຮອດປີ 2025, ວິໄສທັດຮອດປີ 2030 ໃນໄຕມາດທີ IV ປີ 2017.

ຊ. ສອງຝ່າຍ ສືບຕໍ່ປະສານສົມທົບກັນສ້າງ website ເສດຖະກິດ-ການຄ້າ ລະຫວ່າງ ກະຊວງອຸດສາຫະກໍາ ແລະ ການຄ້າສອງປະເທດ ໃຫ້ສໍາເລັດ, ເອົາເຂົ້າສູ່ການນໍາໃຊ້.

**3. ການຮ່ວມມືດ້ານຄົມມະນາຄົມ-ຂົນສົ່ງ:**

ກ. ສອງຝ່າຍ ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈໍາ ລະຫວ່າງ ສອງລັດຖະບານ ກ່ຽວກັບຍຸດທະສາດການຮ່ວມມືດ້ານຄົມມະນາຄົມ-ຂົນສົ່ງ ໄລຍະ 2016-2025, ວິໄສທັດຮອດປີ 2030; ຍູ້ແຮງການຜັນຂະຫຍາຍໂຄງການເສັ້ນທາງດ່ວນ ວຽງຈັນ-ຮ່າໂນ້ຍ; ຄົ້ນຄ້ວາກໍ່ສ້າງ ແລະ ຍົກລະດັບເສັ້ນທາງເຊື່ອມຕໍ່ແລວທາງເສດຖະກິດ ຕາເວັນອອກ-ຕາເວັນຕົກ ແລະ ເຊື່ອມຕໍ່ກັບພາກພື້ນ ໃນໂຄງການພັດທະນາຄົມມະນາຄົມ-ຂົນສົ່ງ ໃນບັນດາປະເທດ ອາຊຽນ ແລະ GMS.

ຂ. ສອງຝ່າຍ ສືບຕໍ່ສົມທົບກັນຊອກຫາແຫຼ່ງທຶນ ເພື່ອຜັນຂະຫຍາຍບັນດາໂຄງການຄົມມະນາຄົມທີ່ສໍາຄັນ, ມີລັກສະນະຍຸດທະສາດ ເພື່ອຮັບໃຊ້ແກ່ການພັດທະນາຂອງສອງປະເທດ ໂດຍສະເພາະ ແມ່ນເສັ້ນທາງດ່ວນ ວຽງຈັນ-ຮ່າໂນ້ຍ. ສໍາລັບໂຄງການເສັ້ນທາງດ່ວນ ວຽງຈັນ-ຮ່າໂນ້ຍ, ສອງຝ່າຍ ເປັນເອກະພາບມອບໃຫ້ກະຊວງໂຍທາທິການ-ຂົນສົ່ງຂອງລາວ ແລະ ກະຊວງຄົມມະນາຄົມ-ຂົນສົ່ງຫວຽດນາມ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ທີ່ກ່ຽວຂ້ອງຂອງສອງປະເທດ ຄົ້ນຄ້ວາ, ເປັນເສນາທິການໃຫ້ນາຍົກລັດຖະມົນຕີສອງປະເທດ ຕົກລົງຜັນຂະຫຍາຍໂຄງການ ໄປຕາມບາດກ້າວ ເຊິ່ງ



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn 09869708

ປະກອບດ້ວຍ: ການສ້າງບົດລາຍງານການສຶກສາຄວາມເປັນໄປໄດ້, ຊອກຫາ ແລະ ຮຽກຮ້ອງແຫຼ່ງທຶນຊ່ວຍເຫຼືອຕ່າງໆ ມາໃຫ້ໂຄງການ.

ຄ. ຝ່າຍຫວຽດນາມ ເຫັນດີສ້າງເງື່ອນໄຂສະດວກ ເພື່ອໃຫ້ຝ່າຍລາວ ສົ່ງອອກ-ນໍາເຂົ້າສິນຄ້າຜ່ານບັນດາທ່າເຮືອທຸກແຫ່ງ ຂອງຫວຽດນາມ.

ລັດຖະບານຫວຽດນາມ ສະໜັບສະໜູນລາວ ສ້າງຕັ້ງບໍລິສັດຂອງລາວ ຖືຮຸ້ນ 100% ຫຼື ຮ່ວມທຶນກັບຝ່າຍຫວຽດນາມ ເພື່ອລົງທຶນພັດທະນາທ່າທຽບເຮືອ ຈໍານວນໜຶ່ງ ຢູ່ທ່າເຮືອຫວຸງອາງ ໃຫ້ສອດຄ່ອງຕາມລະບຽບກົດໝາຍຂອງຫວຽດນາມ ໂດຍມີກໍານົດ 70 ປີ ແລະ ສາມາດຕໍ່ອາຍຸໄດ້ຕາມການເຫັນດີຂອງຝ່າຍຫວຽດນາມ.

ມອບໃຫ້ກະຊວງໂຍທາທິການ - ຂົນສົ່ງຂອງລາວ, ກະຊວງຄົມມະນາຄົມ - ຂົນສົ່ງຫວຽດນາມ, ຄະນະກໍາມະການປະຊາຊົນແຂວງຮ່າຕິ້ງ ເປັນເຈົ້າການປະສານສົມທົບກັບກັບບັນດາກະຊວງ,ຂະແໜງການ, ທ້ອງຖິ່ນ ທີ່ກ່ຽວຂ້ອງຂອງສອງຝ່າຍ ເປັນເອກະພາບດ້ານຮູບການ ເພື່ອລາຍງານນາຍົກລັດຖະມົນຕີສອງປະເທດ ພິຈາລະນາຕົກລົງ.

ງ. ກ່ຽວກັບເສັ້ນທາງ ແດ່ພູທິດເຜິ້ງ ທານາຊອນ:

ມອບໃຫ້ກະຊວງການເງິນສອງປະເທດ ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ ທີ່ກ່ຽວຂ້ອງຂອງສອງຝ່າຍ ປຶກສາຫາລືເປັນເອກະພາບດ້ານຮູບການ ຕາມທິດຂອງລັດຖະບານລາວ ກູ້ຢືມທຶນຈາກບັນດາທະນາຄານທຸລະກິດຫວຽດນາມ ເພື່ອມາຈັດຕັ້ງປະຕິບັດໂຄງການ. ລັດຖະບານຫວຽດນາມ ຖົມຊົມອັດຕາດອກເບ້ຍທີ່ຜິດດ່ຽງ, ສອດຄ່ອງກັບຄວາມສາມາດດ້ານງົບປະມານຂອງແຕ່ລະປະເທດ, ນໍາສະເໜີລາຍງານນາຍົກລັດຖະມົນຕີສອງປະເທດ ພິຈາລະນາຕົກລົງ.

ຈ. ສອງຝ່າຍ ສືບຕໍ່ກວດກາ, ສະຫຼຸບຖອດຖອນບົດຮຽນການຈັດຕັ້ງປະຕິບັດຮູບການກວດກາ **"ປ່ອງດຽວ, ຈຸດດຽວ"** ຢູ່ດ່ານຊາຍແດນສາກົນແດນສະຫວັນ - ລາວບາວ ເພື່ອສຶກສາຄວາມເປັນໄປໄດ້ໃນການເປີດກວ້າງຮູບແບບການກວດກາດັ່ງກ່າວ ໄປຍັງບັນດາດ່ານຊາຍແດນສາກົນອື່ນ ຕາມຈິດໃຈສັນຍາ GMS.

**4. ໃນຂົງເຂດອຸດສາຫະກໍາ:**

ກ. ສອງຝ່າຍ ສືບຕໍ່ຜັນຂະຫຍາຍບົດບັນທຶກ ລະຫວ່າງ ສອງລັດຖະບານ ວ່າດ້ວຍການພັດທະນາບັນດາໂຄງການເຂື່ອນໄຟຟ້າ ຢູ່ລາວ ແລະ ການຊື້-ຂາຍໄຟຟ້າ ລະຫວ່າງ ສອງປະເທດ ຮອດປີ 2030 ທີ່ໄດ້ເຊັນກັນ ຄັ້ງວັນທີ 05 ຕຸລາ 2016; ສືບຕໍ່ເຈລະຈາ ແລະ ກ້າວໄປເຖິງການລົງນາມໃນເອກະສານຕ່າງໆແນໃສ່ຫັນບົດບັນທຶກດັ່ງກ່າວ ໃຫ້ເປັນອັນລະອຽດ ເພື່ອສ້າງເງື່ອນໄຂສະດວກໃຫ້ແກ່ການຈັດຕັ້ງປະຕິບັດ.

ຂ. ສອງຝ່າຍ ສືບຕໍ່ເອົາໃຈໃສ່ຊີ້ນໍາໜ່ວຍງານທີ່ກ່ຽວຂ້ອງ ແກ້ໄຂຂໍ້ຫຍຸ້ງຍາກ, ຂ້ອງຄາ ເພື່ອຊຸກຍູ້ຄວາມຄືບໜ້າຂອງໂຄງການໄຟຟ້ານໍ້າຕົກ ແລະ ບໍ່ແຮ່.

ຄ. ຕໍ່ກັບໂຄງການເຂື່ອນໄຟຟ້າ ມີລີ-ນໍ້າໂມ້ 1, ສອງຝ່າຍ ເປັນເອກະພາບຮຽກຮ້ອງໃຫ້ເຈົ້າຂອງໂຄງການ ສໍາເລັດບົດລາຍງານການຕີລາຄາປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມຂອງໂຄງການ ບົນດິນແດນຂອງລາວ ຢ່າງລະອຽດ, ນໍາລາຍງານລັດຖະບານສອງປະເທດ ພິຈາລະນາ, ຕົກລົງໃນການລົງນາມໃນສັນຍາ ລະຫວ່າງ ສອງລັດຖະບານ ວ່າດ້ວຍການຮ່ວມມືພັດທະນາໂຄງການດັ່ງກ່າວ.

**5. ການຮ່ວມມືດ້ານກະສິກໍາ-ປ່າໄມ້ ແລະ ພັດທະນາຊົນນະບົດ:**

ກ. ສອງຝ່າຍ ຊຸກຍູ້ການຈັດຕັ້ງປະຕິບັດໂຄງການຮ່ວມມື ກ່ຽວກັບການແບ່ງເຂດກະສິກໍາ, ພັດທະນາຊົນນະບົດໃໝ່, ຊົນລະປະທານ ຢູ່ສອງແຂວງຫົວພັນ ແລະ ຊຽງຂວາງ.



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn
09869708

ຂ. ສອງຝ່າຍ ສືບຕໍ່ເພີ່ມທະວີການຮ່ວມມືຄົ້ນຄ້ວາດ້ານວິທະຍາສາດ, ຖ່າຍທອດເຕັກໂນໂລຊີ, ໃຫ້ຄໍາປຶກສາ ໃນຂົງເຂດກະສິກໍາ ແລະ ພັດທະນາຊົນນະບົດ; ສ້າງ ແລະ ຈັດຕັ້ງຜັນຂະຫຍາຍແຜນການຮ່ວມມື, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ໃນການຄຸ້ມຄອງປົກປັກຮັກສາປ່າໄມ້, ສະກັດກັ້ນການຕັດໄມ້ທໍາລາຍປ່າ, ປົກປັກຮັກສາຊັບພະຍາກອນທໍາມະຊາດ, ກັກກັນສຸຂາອະນາໄມພືດ-ສັດ, ການປະມົງ, ຊົນລະປະທານ ແລະ ວຽກງານສົ່ງເສີມກະສິກໍາ.

ຄ. ສອງຝ່າຍ ຊຸກຍູ້ ແລະ ສ້າງເງື່ອນໄຂສະດວກໃຫ້ແກ່ວິສາຫະກິດສອງປະເທດ ລົງທຶນໃນຂົງເຂດກະສິກໍາ ທີ່ນໍາໃຊ້ເຕັກໂນໂລຊີທັນສະໄໝ.

**6. ການຮ່ວມມືດ້ານຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ:**

ກ. ສອງຝ່າຍ ສືບຕໍ່ເພີ່ມທະວີການຮ່ວມມື, ສົມທົບກັນຢ່າງແໜ້ນແຟ້ນ ກັບບັນດາປະເທດ, ບັນດາອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ນໍາໃຊ້ແຫລ່ງນໍ້າ, ຊັບໃນນໍ້າຂອງແມ່ນໍ້າຂອງ ຢ່າງມີປະສິດທິຜົນ ແລະ ຍືນຍົງ, ຮັບປະກັນຜົນປະໂຫຍດຢ່າງກົມກຽວ ໃຫ້ແກ່ບັນດາປະເທດ ອະນຸພາກພື້ນແມ່ນໍ້າຂອງ ພ້ອມທັງມີກົນໄກປະສານງານ ລະຫວ່າງ ສອງຝ່າຍ ແລະ ແຕ່ລະຝ່າຍ ທີ່ກ່ຽວຂ້ອງ ເພື່ອຕິດຕາມ, ກວດກາຢ່າງແໜ້ນແຟ້ນ ກ່ຽວກັບຜົນກະທົບຕ່າງໆ.

ຂ. ສອງຝ່າຍ ຊຸກຍູ້ການຮ່ວມມືກັບຄົ້ນຄ້ວາວິທະຍາສາດໃນຂົງເຂດທໍລະນີສາດ ແລະ ແຮ່ທາດ, ຊັບພະຍາກອນ, ສິ່ງແວດລ້ອມ...; ຜັນຂະຫຍາຍການສໍາຫລວດແຮ່ທາດ ແລະ ສ້າງແຜນທີ່ທໍລະນີສາດ ມາດຕາສ່ວນ 1/200.000 ເຂດບໍລິຄໍາໄຊ-ໄຊສົມບູນ.

**7. ການຮ່ວມມືໃນຂົງເຂດວິທະຍາສາດ, ເຕັກໂນໂລຊີ**

ກ. ສອງຝ່າຍ ສືບຕໍ່ປະສານສົມທົບກັນຈັດຕັ້ງປະຕິບັດບັນດາໂຄງການຄົ້ນຄ້ວາວິທະຍາສາດ ແລະ ພັດທະນາເຕັກໂນໂລຊີ ລະຫວ່າງ ສອງປະເທດ ໂດຍສຸມໃສ່ບັນດາຂົງເຂດ ເຊັ່ນ: ກະສິກໍາ-ເຕັກໂນໂລຊີທັນສະໄໝ, ທໍລະນີສາດ-ແຮ່ທາດ, ພະລັງງານທົດແທນ-ວັດສະດຸໃໝ່, ມາດຖານຄຸນນະພາບ, ຄວາມປອດໄພດ້ານລັງສີ-ນິວເຄຼຍ, ຊັບສິນທາງປັນຍາ.

ຂ. ສອງຝ່າຍ ສືບຕໍ່ຊຸກຍູ້ເພີ່ມທະວີການຮ່ວມມືດ້ານຄວາມສາມາດໃນການຄຸ້ມຄອງ, ສ້າງນະໂຍບາຍ, ຄົ້ນຄ້ວາວິທະຍາສາດ ແລະ ຜັນຂະຫຍາຍເຕັກໂນໂລຊີ ໃຫ້ແກ່ກະຊວງວິທະຍາສາດ-ເຕັກໂນໂລຊີ ແລະ ສະພາວິທະຍາສາດແຫ່ງຊາດລາວ.

## ມາດຕາ 4
## ການຮ່ວມມືດ້ານການສຶກສາ, ກໍ່ສ້າງ ແລະ ພັດທະນາຊັບພະຍາກອນມະນຸດ

1. ສອງຝ່າຍ ສືບຕໍ່ນໍາເອົາເນື້ອໃນບັນດາຜະລິດຕະພັນ ຂອງໂຄງການປະຫວັດສາດສາຍພົວພັນພິເສດ ລາວ-ຫວຽດນາມ ເຂົ້າໃນຫລັກສູດການສິດສອນ ຢູ່ໂຮງຮຽນຕ່າງໆ ຂອງສອງປະເທດ; ສືບຕໍ່ປ່ຽນແປງໃໝ່, ເປັນເອກະພາບໃນການຄຸ້ມຄອງບັນດາຮູບການກໍ່ສ້າງນັກສຶກສາລາວ ທີ່ຮຽນ ຢູ່ຫວຽດນາມ ເພື່ອຍົກສູງຄຸນນະພາບໃນການກໍ່ສ້າງ ແລະ ພັດທະນາຊັບພະຍາກອນມະນຸດ.

2. ລັດຖະບານຫວຽດນາມ ໃຫ້ທຶນການສຶກສາແກ່ພະນັກງານ, ນັກສຶກສາລາວ ໄປຮຽນຢູ່ຫວຽດນາມ ຈໍານວນ 1.000 ທຶນ, ຮຽນລະບົບປະລິນຍາຕີ, ເໜືອປະລິນຍາຕີ ແລະ ບໍາລຸງໄລຍະສັ້ນ (ນັບທັງທຶນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; 40 ທຶນ ໃຫ້ແກ່ລູກຫລານຊາວຫວຽດນາມຕ່າງດ້າວ ຢູ່ລາວ ແລະ 10 ທຶນ ມອບໃຫ້ສະຖານທູດຫວຽດນາມ ປະຈໍາລາວ ເປັນເຈົ້າການປະສານສົມທົບກັບກະຊວງສຶກສາທິການ ແລະ ກິລາລາວ ຄັດເລືອກ).



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn 09869708

ປີ 2017, ສອງຝ່າຍ ເຫັນດີເປັນເອກະພາບ ເພີ່ມທຶນບຳລຸງໄລຍະສັ້ນ ໃຫ້ແກ່ພະນັກງານ, ລັດຖະກອນ ຂອງລາວ ຈຳນວນ 246 ທຶນ.

ແຜນການບຳລຸງສ້າງພະນັກງານ, ນັກສຶກສາລາວ ຢູ່ຫວຽດນາມ ປະຈຳປີ 2017 ໄດ້ລະບຸໄວ້ ໃນສາລະບານເລກ 1 ຄັດຕິດຂໍ້ຕົກລົງສະບັບນີ້.

3. ລັດຖະບານລາວ ໃຫ້ທຶນການສຶກສາແກ່ພະນັກງານ, ນັກສຶກສາຫວຽດນາມ ຈຳນວນ 60 ທຶນ, ຮຽນລະບົບປະລິນຍາຕີ, ເໜືອປະລິນຍາຕີ ແລະ ບຳລຸງໄລຍະສັ້ນ ຢູ່ລາວ.

4. ສອງຝ່າຍ ສືບຕໍ່ຊຸກຍູ້ການສິດສອນພາສາຫວຽດ ຢູ່ລາວ; ສົ່ງເສີມພະນັກງານລາວ ຮຽນພາສາຫວຽດ ແລະ ພະນັກງານຫວຽດນາມ ຮຽນພາສາລາວ; ສົ່ງເສີມບັນດາທ້ອງຖິ່ນທີ່ມີຊາຍແດນຮ່ວມກັນ ແລະ ທ້ອງຖິ່ນແຂວງຄູ່ຮ່ວມສ່ຽວ ເພີ່ມທະວີການແລກປ່ຽນປະສົບການ, ຝຶກອົບຮົມວິຊາສະເພາະ ແລະ ບຳລຸງພາສາ ເພື່ອຮັບໃຊ້ຄວາມຕ້ອງການຂອງວຽກງານ.

5. ສອງຝ່າຍ ສືບຕໍ່ປະສານສົມທົບກັນຈັດຕັ້ງປະຕິບັດໂຄງການທົດລອງສອນສອງພາສາ ລາວ-ຫວຽດ ໃນໂຮງຮຽນຫງວຽນ ຢູ່ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໄລຍະ 2014-2020 ແລະ ໂຄງການຮຽບຮຽງຫຼັກສູດສອນພາສາຫວຽດ ແລະ ປື້ມຄູ່ມືຂອງຄູອາຈານ ເປັນພາສາຫວຽດ (ທົດລອງຕົວຈິງ) ເລີ່ມແຕ່ ຫ້ອງປໍ 1 ຮອດ ຫ້ອງ ມໍ 7 ໃຫ້ແກ່ນັກຮຽນລາວ ຢູ່ລາວ; ພິຈາລະນາເພີ່ມອັດຕາເບ້ຍລ້ຽງ ໃຫ້ແກ່ນັກຮຽນລາວ ທີ່ຮຽນ ຢູ່ຫວຽດນາມ ແລະ ນັກຮຽນຫວຽດນາມ ທີ່ຮຽນ ຢູ່ລາວ ໃນປີ 2017.

6. ສອງຝ່າຍ ແລກປ່ຽນເປັນເອກະພາບ ເພື່ອລົງນາມໃນອານຸສັນຍາຮ່ວມມືບຳລຸງສ້າງພະນັກງານ ໄລຍະ 2017-2021 ປ່ຽນແທນອານຸສັນຍາຮ່ວມມືບຳລຸງສ້າງພະນັກງານ ໄລຍະ 2012-2017 ທີ່ມີຜົນບັງຄັບໃຊ້ ໝົດອາຍຸໃນວັນທີ 09 ກຸມພາ 2017.

7. ລັດຖະບານຫວຽດນາມ ສືບຕໍ່ສົ່ງຄູອາຈານ ມາສິດສອນພາສາຫວຽດ ຢູ່ລາວ; ຊ່ວຍງົບປະມານ ເພື່ອບຳລຸງການສອນພາສາຫວຽດ ໃຫ້ແກ່ນັກສຶກສາລາວ ໄລຍະ 4 ເດືອນ ຢູ່ລາວ ກ່ອນຈະໄປຮຽນ ຢູ່ຫວຽດນາມ.

## ມາດຕາ 5
## ການຮ່ວມມືໃນຂົງເຂດອື່ນໆ

1. ສອງຝ່າຍ ປະສານສົມທົບກັນກຳນົດສະຖານທີ່ປູກສ້າງສວນອຸທິຍານ ປະທານ ໂຮ່ຈິມິນ ຢູ່ນະຄອນຫລວງວຽງຈັນ ໃຫ້ສຳເລັດ; ກະກຽມເປັນຢ່າງດີ: ບັນດາກິດຈະກຳສົມລະປະວັນນະຄະດີ, ການເຄື່ອນໄຫວສົ່ງເສີມການທ່ອງທ່ຽວ, ການແລກປ່ຽນບັນດາກິດຈະກຳດ້ານກິລາ, ສື່ມວນຊົນ, ວິທະຍຸ-ໂທລະພາບ ໃນໂອກາດຄົບຮອບ 55 ປີ ສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ແລະ ຄົບຮອບ 40 ປີ ວັນເຊັນສົນທິສັນຍາຮ່ວມມືມິດຕະພາບ ລະຫວ່າງ ລາວ ແລະ ຫວຽດນາມ. ສອງຝ່າຍ ປະສານສົມທົບກັນຈັດຕັ້ງວັນທ່ອງທ່ຽວວັດທະນະທຳຫວຽດນາມ ຢູ່ລາວ ແລະ ວັນທ່ອງທ່ຽວວັດທະນະທຳລາວ ຢູ່ຫວຽດນາມ ໄປພ້ອມໆກັນ.

2. ສອງຝ່າຍ ສືບຕໍ່ສົ່ງເສີມບັນດາກະຊວງ, ຂະແໜງການ, ອົງການຈັດຕັ້ງ, ທ້ອງຖິ່ນ ແລະ ບັນດາວິສາຫະກິດຂອງສອງປະເທດ ໃຫ້ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນບັນດາຂົງເຂດທີ່ສອງຝ່າຍມີທ່າແຮງ; ຝ່າຍຫວຽດນາມ ສືບຕໍ່ໃຫ້ການຊ່ວຍເຫລືອ ຕາມຄວາມສາມາດຂອງຕົນ ໃຫ້ແກ່ບັນດາກະຊວງ, ຂະແໜງການ, ອົງການຈັດຕັ້ງ ແລະ ທ້ອງຖິ່ນຕ່າງໆ ໃຫ້ແກ່ລາວ.



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn
09869708

3. ສອງຝ່າຍ ສືບຕໍ່ຊຸກຍູ້ການຮ່ວມມືໃນຂົງເຂດກົດໝາຍ ແລະ ຍຸຕິທຳ, ຕັ້ງໜ້າຈັດຕັ້ງປະຕິບັດ ສະຫຼຸບກອງປະຊຸມເປີດກ້ວາງວຽກງານຍຸຕິທຳ ລາວ-ຫວຽດນາມ ຄັ້ງທີ 3 ຂອງບັນດາແຂວງ ທີ່ມີຊາຍແດນຮ່ວມກັນ; ຍົກສູງປະສິດທິຜົນການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍການຊ່ວຍເຫຼືອທາງດ້ານຍຸຕິທຳ ກ່ຽວກັບແພ່ງ ແລະ ອາຍາ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ ທີ່ໄດ້ເຊັນກັນຄັ້ງວັນທີ 06 ກໍລະກົດ 1998. ເພີ່ມທະວີການຮ່ວມມືກໍ່ສ້າງ, ບຳລຸງຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ແກ່ພະນັກງານກົດໝາຍ ແລະ ຍຸຕິທຳຂອງສອງຝ່າຍ; ຊຸກຍູ້ຄວາມຄືບໜ້າໃນການຈັດຕັ້ງຜັນຂະຫຍາຍໂຄງການຊ່ວຍໜູນສະຖາບັນຍຸຕິທຳຂອງລາວ.

4. ເພີ່ມທະວີການຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການຮ່ວມມືດ້ານແຮງງານ ລະຫວ່າງ ສອງປະເທດຢ່າງມີປະສິດທິຜົນ, ສ້າງເງື່ອນໄຂສະດວກ ເພື່ອໃຫ້ແຮງງານລາວ ໄປເຮັດວຽກຢູ່ຫວຽດນາມ ແລະ ແຮງງານຫວຽດນາມ ມາເຮັດວຽກຢູ່ລາວ ບົນພື້ນຖານການພົວພັນພິເສດ ລະຫວ່າງ ສອງປະເທດ.

5. ສອງຝ່າຍ ສືບຕໍ່ຊຸກຍູ້, ເພີ່ມທະວີ ແລະ ຮ່ວມມືໃນບັນດາຂົງເຂດ: ແຮງງານ, ວຽກເຮັດງານທຳ, ວິຊາຊີບ, ຜູ້ທີ່ມີຜົນງານ, ຫຼຸດຜ່ອນຄວາມທຸກຍາກ, ຮັກສາ ແລະ ດູແລເດັກນ້ອຍ ແລະ ກໍ່ສ້າງພະນັກງານ.

6. ສອງຝ່າຍ ສືບຕໍ່ຮ່ວມມືແລກປ່ຽນ, ແບ່ງປັນບົດຮຽນ ກ່ຽວກັບນະໂຍບາຍຄຸ້ມຄອງໄປສະນີ, ໂທລະຄົມມະນາຄົມ, ເຕັກໂນໂລຊີຂໍ້ມູນຂ່າວສານ, ຊຸກຍູ້ການຮ່ວມມືໃນລະບົບອິນເຕີເນັດ ໃຫ້ມີຄວາມປອດໄພ, ຊຸກຍູ້ສົ່ງເສີມການລົງທຶນໃນຂົງເຂດເຕັກໂນໂລຊີຂໍ້ມູນຂ່າວສານ-ການສື່ສານ, ພັດທະນາພື້ນຖານໂຄງລ່າງຂໍ້ມູນຂ່າວສານ, ສົມທົບກັນນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ-ການສື່ສານ ແນໃສ່ຊຸກຍູ້ການຮ່ວມມືໃນຂົງເຂດ ທີ່ກ່ຽວຂ້ອງອື່ນໆ.

## ມາດຕາ 6
## ທຶນຊ່ວຍເຫລືອລ້າ

1. ສອງຝ່າຍ ເຫັນດີເປັນເອກະພາບ ຕົວເລກທຶນຊ່ວຍເຫລືອລ້າຂອງຫວຽດນາມ ໃຫ້ແກ່ ລາວ ປີ 2017 ຈຳນວນ 850 ຕື້ດົ່ງ ເຊິ່ງໄດ້ຈັດສັນໄວ້ໃນສາລະບານເລກ 2 ຄັດຕິດຂໍ້ຕົກລົງສະບັບນີ້, ໃນນັ້ນ:

ກ. ທຶນປີ 2017 ແມ່ນ 560 ຕື້ດົ່ງ.

ຂ. ທຶນ ປີ 2016 ຈຳນວນ 290 ຕື້ດົ່ງ ໂອນມາປະຕິບັດໃນປີ 2017.

2. ສອງຝ່າຍ ປະສານສົມທົບກັນຈັດຕັ້ງການກວດກາບັນດາໂຄງການ ທີ່ນຳໃຊ້ທຶນຊ່ວຍເຫຼືອ ແນໃສ່ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດ, ຮັບປະກັນຄວາມຄືບໜ້າ ແລະ ຄຸນນະພາບ ຢ່າງເປັນປົກກະຕິ; ປະສານສົມທົບກັນກວດກາ, ຕີລາຄາສະພາບຕົວຈິງຂອງບັນດາໂຄງການ ທີ່ໄດ້ສຳເລັດ, ມອບ-ຮັບ ແລະ ເອົາເຂົ້າສູ່ການນຳໃຊ້, ກຳນົດບັນດາກິດຈະການທີ່ຈຳເປັນ ຕ້ອງໄດ້ບູລະນະສ້ອມແປງ. ມອບໃຫ້ປະທານຄະນະກຳມະການຮ່ວມມື ສອງປະເທດ ນຳສະເໜີຕໍ່ສອງນາຍົກລັດຖະມົນຕີ ເພື່ອພິຈາລະນາຕົກລົງ ກ່ຽວກັບການບຳລຸງຮັກສາ ແລະ ບູລະນະສ້ອມແປງບັນດາກິດຈະການ, ໂຄງການ ເຊິ່ງປະຈຸບັນ ໄດ້ຊຸດໂຊມ, ເປ່ເພ ພາຍຫຼັງທີ່ເອົາເຂົ້າສູ່ການນຳໃຊ້.

3. ສອງຝ່າຍ ສົມທົບກັນປ່ຽນແປງໃໝ່ ກ່ຽວກັບບັນດາກົນໄກ, ວິທີການຈັດຕັ້ງປະຕິບັດ ແນໃສ່ຍົກສູງປະສິດທິຜົນການນຳໃຊ້ທຶນຊ່ວຍເຫຼືອລ້າຂອງຫວຽດນາມ ໃຫ້ແກ່ລາວ, ຫຼີກເວັ້ນການນຳໃຊ້ແບບກະແຈກກະຈາຍ, ດັດປັບບັນຊີລາຍການຂອງບັນດາໂຄງການ ທີ່ນຳໃຊ້ທຶນຊ່ວຍເຫຼືອລ້າ ຕາມທິດສຸມໃສ່ໃຫ້ບຸລິມະສິດບັນດາໂຄງການ ຢູ່ແຂວງຫົວພັນ, ຊຽງຂວາງ ແລະ ໂຄງການຈຸດສຸມ ຈຳນວນໜຶ່ງທີ່ຈຳເປັນ ຢູ່ແຂວງໄຊສົມບູນ.



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn
09869708

**ມາດຕາ 7**
**ຜົນສັກສິດ, ການປັບປຸງ, ດັດແກ້ເພີ່ມເຕີມ**

1. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ມີຄຸນຄ່າຈົນເຖິງວັນປະກາດຜົນບັງຄັບໃຊ້ຂໍ້ຕົກລົງ ວ່າດ້ວຍແຜນການຮ່ວມມືທະວິພາຄີ ລະຫວ່າງ ລັດຖະບານສອງປະເທດປະຈໍາປີຕໍ່ໄປ.

2. ໃນເວລາຈັດຕັ້ງປະຕິບັດ, ຂໍ້ຕົກລົງສະບັບນີ້ ອາດມີການດັດແປງ, ປັບປຸງເພີ່ມເຕີມຕາມການຕົກລົງເປັນລາຍລັກອັກສອນຂອງສອງຝ່າຍ. ທຸກການດັດແກ້, ປັບປຸງເພີ່ມເຕີມ ແມ່ນສ່ວນໜຶ່ງ ທີ່ບໍ່ສາມາດຕັດແຍກອອກຈາກຂໍ້ຕົກລົງສະບັບນີ້ ແລະ ມີຜົນບັງຄັບໃຊ້ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 1 ມາດຕານີ້.

ເຮັດທີ່ນະຄອນຫຼວງຮ່າໂນ້ຍ, ສາທາລະນະລັດ ສັງຄົມນິຍົມຫວຽດນາມ, ວັນທີ 08 ກຸມພາ 2017 ເປັນສອງສະບັບ ດ້ວຍພາສາຫວຽດ ແລະ ພາສາລາວ ທັງສອງສະບັບລ້ວນແຕ່ມີຄຸນຄ່າເທົ່າທຽມກັນ, ແຕ່ລະຝ່າຍ ຮັກສາໄວ້ 01 ສະບັບ.

**ຕາງໜ້າ**
**ລັດຖະບານແຫ່ງ ສາທາລະນະລັດ**
**ສັງຄົມນິຍົມຫວຽດນາມ**

**ຫງວຽນ ຈີ່ ຢຸງ**
**ລັດຖະມົນຕີ**
**ກະຊວງແຜນການ ແລະ ການລົງທຶນ**

**ຕາງໜ້າ**
**ລັດຖະບານ ແຫ່ງ ສາທາລະນະລັດ**
**ປະຊາທິປະໄຕ ປະຊາຊົນລາວ**

**ສຸພັນ ແກ້ວມີໄຊ**
**ລັດຖະມົນຕີ**
**ກະຊວງແຜນການ ແລະ ການລົງທຶນ**

LawSoft * Tel: +84-8-3930 3279 * www.ThuVienPhapLuat.vn 09869708

*ສາລະບານເລກ 1*

## ແຜນບຳລຸງສ້າງພະນັກງານ, ນັກສຶກສາຢູ່ ສສ ຫວຽດນາມ ສຳລັບປີ 2017

| ລ/ດ | ຂະແໜງການຕ່າງໆ | ຈຳນວນ | ໄລຍະຍາວ | | | ໄລຍະສັ້ນ | | ເວລາ |
|---|---|---|---|---|---|---|---|---|
| | | | ຕີ | ໂທ | ເອກ | ຈຳນວນທືນ | ພະນັກງານ | |
| 1 | ຂົງເຂດ ການເມືອງ-ການປົກຄອງ (ຈັດຕັ້ງສູນກາງ) | 290 | 60 | 30 | 10 | 190 | | |
| | ວຽກງານການເມືອງ | | 20 | 20 | 8 | 20 | ພະນັກງານ | 5 ເດືອນ |
| | ການປົກຄອງ | | 20 | 10 | 2 | 20 | ພະນັກງານ | 2 ເດືອນ |
| | ວຽກງານຈັດຕັ້ງ | | 20 | | | 15 | ພະນັກງານ | 3 ເດືອນ |
| | ວຽກງານໂຄສະນາອົບຮົມ | | | | | 15 | ພະນັກງານ | 3 ເດືອນ |
| | ຄູການເມືອງການປົກຄອງ | | | | | 20 | ພະນັກງານ | 3 ເດືອນ |
| | ວຽກງານແມ່ຍິງ | | | | | 15 | ພະນັກງານ | 2 ເດືອນ |
| | ຍົກລະດັບວຽກງານກວດກາລັດ | | | | | 20 | ພະນັກງານ | 3 ເດືອນ |
| | ຄະນະພົວພັນສູນກາງພັກ | | | | | 15 | ພະນັກງານ | 2 ເດືອນ |
| | ວຽກງານແນວລາວສ້າງຊາດ | | | | | 15 | ພະນັກງານ | 2 ເດືອນ |
| | ວຽກງານກຳມະບານ | | | | | 15 | ພະນັກງານ | 2 ເດືອນ |
| | ວຽກງານຊົນເຜົ່າ (ກຊ ພາຍໃນ) | | | | | 20 | ພະນັກງານ | 3 ເດືອນ |
| 2 | ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ | 224 | 190 | 25 | 9 | 0 | | |
| | ປ້ອງກັນຄວາມສະຫງົບ | | 90 | 10 | 4 | | | |
| | ປ້ອງກັນຊາດ | | 100 | 15 | 5 | | | |
| 3 | ການສຶກສາ ແລະ ກິລາ | 123 | 4 | 71 | 8 | 40 | ພະນັກງານ | 3 ເດືອນ |
| 3.1 | ສຶກສາ | 74 | 0 | 66 | 8 | | | |
| | ວິຊາ ຄະນິດສາດ (ອາຈານສອນ) | | | 3 | 2 | | | |
| | ວິຊາ ຟີຊິກສາດ (ອາຈານສອນ) | | | 4 | 1 | | | |
| | ວິຊາ ເຄມີສາດ (ອາຈານສອນ) | | | 3 | 1 | | | |
| | ວິຊາ ຊີວະສາດ (ອາຈານສອນ) | | | 4 | | | | |
| | ວິຊາ ໄອທີ (ອາຈານສອນ) | | | 5 | | | | |
| | ບໍລິຫານການສຶກສາ (ອາຈານສອນ) | | | 3 | 1 | | | |
| | ພາລະສຶກສາ (ອາຈານສອນ) | | | 3 | | | | |
| | ວິຊາ ກົດໝາຍ (ອາຈານສອນ) | | | 4 | | | | |
| | ວິຊາ ປ່າໄມ້ (ອາຈານສອນ) | | | 3 | | | | |
| | ວິຊາ ກະສິກຳ (ອາຈານສອນ) | | | 2 | | | | |
| | ວິຊາ ສັດຕະວະແພດ (ອາຈານສອນ) | | | 3 | | | | |
| | ວິຊາ ກໍ່ສ້າງ (ອາຈານສອນ) | | | 2 | | | | |
| | ວິຊາ ສິ່ງແວດລ້ອມ (ອາຈານສອນ) | | | 3 | 1 | | | |
| | ວິຊາ ຊົນລະປະທານ (ອາຈານສອນ) | | | 3 | 1 | | | |
| | ວິຊາ ໂຍທາ-ຂົນສົ່ງ (ອາຈານສອນ) | | | 3 | 1 | | | |
| | ວິຊາ ໄຟຟ້າ (ອາຈານສອນ) | | | 3 | | | | |
| | ວິຊາ ກົນຈັກ (ອາຈານສອນ) | | | 2 | | | | |
| | ວິຊາ ເອເລັກໂຕນິກ (ອາຈານສອນ) | | | 2 | | | | |
| | ວິຊາ ພາສາສາດ-ວັດທະນະທຳ (ອາຈານສອນ) | | | 3 | | | | |
| | ກິລາກາຍະກຳ-ປ້ອງກັນຊາດ | | | 4 | | | | |
| | ບໍລິຫານຊັບພະຍາກອນມະນຸດ | | | 4 | | | | |
| | ອົບຮົມຄູສອນວິຊາທຳມະຊາດ | | | | | 40 | ພະນັກງານ | 3ເດືອນ |
| 3.2 | ກິລາ | 9 | 4 | 5 | 0 | 0 | | |
| | ການຄຸ້ມຄອງກິລາ | | | 1 | | | | |



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn 09869708

| ລ/ດ | ຂະແໜງການຕ່າງໆ | ຈຳນວນ | ໄລຍະຍາວ | | | ໄລຍະສັ້ນ | | ເວລາ |
|---|---|---|---|---|---|---|---|---|
| | | | ຕີ | ໂທ | ເອກ | ຈຳນວນທຶນ | ພະນັກງານ | |
| | ວິທະຍາສາດການກິລາ | | 2 | 2 | | | | |
| | ພະລະສຶກສາ | | | 2 | | | | |
| | ແພດກິລາ | | 2 | | | | | |
| **4** | **ສິລະປະ ແລະ ມະນຸດສາດ** | **33** | 3 | 10 | 0 | 20 | | |
| **4.1** | **ສິລະປະ** | **7** | 1 | 6 | 0 | 0 | | |
| | ດົນຕີ | | 1 | 1 | | | | |
| | ແຕ້ມ | | | 2 | | | | |
| | ປັ້ນຫຼໍ່ | | | 1 | | | | |
| | ສິລະປະໂລຫະ | | | 1 | | | | |
| | ວັດທະນະທຳ ແລະ ທ່ອງທ່ຽວ | | | 1 | | | | |
| | ກາຍະສິນ | | 15 | | | | ນັກຮຽນ | |
| | ສິລະປະກຳປູ | | 15 | | | | ນັກຮຽນ | |
| **4.2** | **ມະນຸດສາດ** | **6** | 2 | 4 | 0 | | | |
| | ສາສະໜາວິທະຍາ | | 1 | | | | | |
| | ຊົນເຜົ່າວິທະຍາ | | 1 | 2 | | | | |
| | ຄຸ້ມຄອງ ວັດທະນະທຳ | | | 2 | | | | |
| | ວຽກງານສາລະບານ (ກຊ ພາຍໃນ ) | | | | | 20 | ພະນັກງານ | 2 ເດືອນ |
| **5** | **ວິທະຍາສາດສັງຄົມ,ຂໍ້ມູນຂ່າວສານ,ໜັງສືພິມ** | **124** | 8 | 15 | 0 | 101 | | |
| **5.1** | **ວິທະຍາສາດສັງຄົມ** | **10** | 2 | 8 | 0 | | | |
| | ວັດທະນະທຳຊົນເຜົ່າ | | 2 | 1 | | | | |
| | ວາລະສານສາດ | | | 1 | | | | |
| | ເສດຖະກິດ | | | 2 | | | | |
| | ແຜນການ | | | 2 | | | | |
| | ເສດຖະກິດການລົງທຶນ | | | 2 | | | | |
| | ວຽກງານສະຖິຕິ | | | | | 20 | ພະນັກງານ | 2 ເດືອນ |
| | ວຽກງານກວດກາປະເມີນຜົນ (ກຊ ພກ-ກທ ) | | | | | 20 | ພະນັກງານ | 2 ເດືອນ |
| | ປັນຍາສາທາວຽດປຸຍສະຖາບັນວິທະຍຸ ຫວຽດນາມ | | | | | 1 | ພະນັກງານ | 8 ເດືອນ |
| | ວິໄຈ ແລະ ຄາດຄະເນການຂຶ້ນແຜນພັດທະນາເສດຖະກິດ | | | | | 20 | ພະນັກງານ | 2 ເດືອນ |
| | ປັກລະດັບການຄຸ້ມຄອງໂຄງການ ການລົງທຶນ | | | | | 20 | ພະນັກງານ | 2 ເດືອນ |
| **5.2** | **ຂ່າວສານ** | **14** | 6 | 7 | 1 | 0 | | |
| | ການພິມ | | 2 | 1 | | | | |
| | ເຕັກໂນໂລຢີ ຂໍ້ມູນຂ່າວສານ | | | 2 | | | | |
| | ເຕັກນິກສື່ສານ | | | 2 | | | | |
| | ຂ່າວສານ | | | 1 | | | | |
| | ສື່ໜີເອກະສານ | | 2 | 1 | 1 | | | |
| | ຫໍສະໝຸດ | | 2 | | | | | |
| | ເຕັກນິກຖ່າຍທອດໂທລະພາບ | | | | | 20 | ພະນັກງານ | 3 ເດືອນ |
| **6** | **ບໍລິຫານທຸລະກິດ ແລະ ກົດໝາຍ** | **101** | 12 | 23 | 6 | 60 | | |
| **6.1** | **ບໍລິຫານທຸລະກິດ** | **19** | 8 | 10 | 1 | | | |
| | ການຄຸ້ມຄອງ ແລະ ວິໄຈຂໍ້ມູນເສດຖະກິດ | | | 1 | 1 | | | |
| | ບັນຊີ-ກວດກາການເງິນ | | 2 | 2 | | | | |
| | ການເງິນ-ທະນາຄານ | | 1 | 2 | | | | |
| | ບໍລິຫານທຸລະກິດສາກົນ | | 2 | 2 | | | | |
| | ທຸລະກິດຫຼັກຊັບ | | 1 | 2 | | | | |
| | ປັກລະດັບວຽກງານກວດສອບ ແຫ່ງລັດ | | 2 | 1 | | 20 | ພະນັກງານ | 3ເດືອນ |
| **6.2** | **ກົດໝາຍ** | **22** | 4 | 13 | 5 | | | |
| | ອາຊະຍາກອນວິທະຍາ ແລະ ການກວດສອບອາຊະຍະກຳ | | | 2 | | | | |
| | ກົດໝາຍການປົກຄອງ | | 2 | 2 | 2 | | | |



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn
09869708

| ລ/ດ | ຂະແໜງການຕ່າງໆ | ຈຳນວນ | ໄລຍະຍາວ | | | ໄລຍະສັ້ນ | | ເວລາ |
|---|---|---|---|---|---|---|---|---|
| | | | ສ | ໂທ | ເອກ | ຈຳນວນທຶນ | ພະນັກງານ | |
| | ກົດໝາຍການຄ້າ | | 1 | 3 | 1 | | | |
| | ກົດໝາຍເສດຖະກິດ | | 1 | 3 | 2 | | | |
| | ການພົວພັນຕ່າງປະເທດ | | | 3 | 0 | | | |
| | ວຽກງານໂອບະການ | | | | | 20 | ພະນັກງານ | 3ເດືອນ |
| | ວຽກງານພາຍໃນ | | | | | 20 | ພະນັກງານ | 3ເດືອນ |
| 7 | **ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ** | 13 | 5 | 7 | 1 | | | |
| | ວິທະຍາສາດຄອມພິວເຕີ | | 1 | 3 | | | | |
| | ເຕັກນິກໂທລະຄົມ | | 2 | 2 | | | | |
| | ໄອທີ | | 2 | 2 | 1 | | | |
| 8 | **ເຕັກນິກ ,ການຜະລິດ ,ການຄ້າ ແລະກໍ່ສ້າງ** | 37 | 6 | 30 | 1 | | | |
| 8.1 | **ວິສະວະກຳ ແລະ ການຄ້າ** | | 4 | 24 | 1 | 0 | | |
| | ການຄ້າສາກົນ | | | 2 | | | | |
| | ການຄ້າພາຍໃນ | | | 2 | | | | |
| | ເສດຖະກິດ ອຸດສາຫະກຳ | | | 2 | | | | |
| | ເຕັກນິກໄຟຟ້າ | | | 2 | | | | |
| | ກໍ່ສ້າງ | | | 2 | | | | |
| | ກໍ່ສ້າງກິດຈະການໄຟຟ້ານ້ຳຕົກ | | | 1 | | | | |
| | ຄຸ້ມຄອງ ແລະ ພັດທະນາແຫຼ່ງນ້ຳ | | | 2 | | | | |
| | ການເດີນສາແຮ່ທາດ | | 1 | 2 | | | | |
| | ຄຸ້ມຄອງບໍ່ແຮ່ | | | 1 | 1 | | | |
| | ຄຸ້ມຄອງພະລັງງານ | | | 2 | | | | |
| | ອຸດກົ້ນບໍ່ແຮ່ | | 1 | 2 | | | | |
| | ກໍ່ສ້າງກິດຈະການໃຕ້ດິນ | | 1 | 2 | | | | |
| | ທໍລະນີສາດ | | 1 | 2 | | | | |
| 8.2 | **ການຜະລິດ ແລະ ການປຸງແຕ່ງ** | 2 | 0 | 2 | 0 | 0 | | |
| | ເຕັກໂນໂລຊີ ດ້ານອາຫານ-ຢາ ແລະ ການປຸງແຕ່ງ | | | 2 | | | | |
| 8.3 | **ການກໍ່ສ້າງ** | 6 | 2 | 4 | 0 | 0 | | |
| | ຄຸ້ມຄອງການກໍ່ສ້າງ | | 1 | 2 | | | | |
| | ສະຖາປັດ ຕະຍະກຳສາດ | | 1 | 2 | | | | |
| 9 | **ກະສິກຳ, ປ່າໄມ້,ການປະມົງ ແລະ ສັດຕະວະແພດ** | 11 | 1 | 10 | 0 | 0 | | |
| 9.1 | **ກະສິກຳ** | 6 | 0 | 6 | 0 | 0 | | |
| | ເສດຖະກິດກະສິກຳ ແລະ ພັດທະນາຊົນນະບົດ | | | 2 | | | | |
| | ເຕັກນິກເຄື່ອງຈັກ ແລະ ອຸປະກອນກົນຈັກກະສິກຳປ່າໄມ້ | | | 1 | | | | |
| | ພືດພັນ ແລະ ເລືອກແນວປູກ | | | 1 | | | | |
| | ລ້ຽງສັດ | | | 2 | | | | |
| 9.2 | **ປ່າໄມ້** | 1 | 0 | 1 | 0 | 0 | | |
| | ພືດພັນ ແລະ ເລືອກແນວພັນໄມ້ | | | 1 | | | | |
| 9.3 | **ການປະມົງ** | 2 | 1 | 1 | 0 | 0 | | |
| | ການປະມົງ | | 1 | 1 | | | | |
| 9.4 | **ສັດຕະວະແພດ** | 2 | 0 | 2 | 0 | 0 | | |
| | ສັດຕະວະແພດ | | | 2 | | | | |
| 10 | **ສາທາລະນະສຸກ** | 14 | 4 | 8 | 2 | 0 | | |
| | ທັນຕະແພດ | | 2 | 1 | | | | |
| | ບໍລິຫານສາທາລະນະສຸກ | | | 2 | 2 | | | |
| | ເພສັດຊະກັມພື້ນເມືອງ | | | 2 | | | | |
| | ແພດສາດ | | 2 | 2 | | | | |
| 11 | **ສະຖາວັດຕິການ** | 37 | 1 | 6 | 0 | 30 | | |



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn

| ລ/ດ | ຂະແໜງການຕ່າງໆ | ຈຳນວນ | ໄລຍະຍາວ | | | ໄລຍະສັ້ນ | | ເວລາ |
|---|---|---|---|---|---|---|---|---|
| | | | ຕີ | ໂທ | ເອກ | ຈຳນວນທຶນ | ພະນັກງານ | |
| | ເສດຖະກິດແຮງງານ | | 1 | 1 | | | | |
| | ຄຸ້ມຄອງແຮງງານ | | | 2 | | 15 | ພະນັກງານ | 3 ເດືອນ |
| | ຝຶກອົບຮົມພັດທະນາສີມືແຮງງານ | | | | | 15 | ພະນັກງານ | 3 ເດືອນ |
| | ວຽກງານປະກັນສັງຄົມ | | | 2 | | | | |
| **12** | **ການບໍລິການ ແລະ ຂົນສົ່ງ** | **30** | **17** | **13** | **0** | **0** | | |
| **12.1** | **ການບໍລິການ** | **10** | **4** | **6** | **0** | **0** | | |
| | ບໍລິຫານທຸລະກິດການທ່ອງທ່ຽວ ແລະ ໂຮງແຮມ | | 1 | 1 | | | | |
| | ທ່ອງທ່ຽວວິທະຍາ | | 1 | 2 | | | | |
| | ເສດຖະກິດການທ່ອງທ່ຽວ | | 1 | 2 | | | | |
| | ພິພິທະພັນວິທະຍາ | | 1 | 1 | | | | |
| **12.2** | **ວຽກງານຂົນສົ່ງ** | **20** | **13** | **7** | **0** | **0** | | |
| | ເຕັກນິກດ້ານການບິນ | | 2 | | | | | |
| | ເຕັກນິກຫົວລົດໄຟ,ຕູ້ລົດໄຟ | | 2 | | | | | |
| | ຈັດຕັ້ງຄຸ້ມຄອງການຂົນສົ່ງ | | 2 | 2 | | | | |
| | ຂົນສົ່ງທາງລົດໄຟ | | 2 | 1 | | | | |
| | ກໍ່ສ້າງທາງລົດໄຟ | | 2 | 2 | | | | |
| | ຄຸ້ມຄອງທາງລົດໄຟໃນເມືອງ | | 2 | | | | | |
| | ຂົວທາງ ລົດໄຟ | | 1 | 2 | | | | |
| **13** | **ລູກຫຼານຊາວຫວຽດນາມຕ່າງດ້າວ** | **40** | **32** | **8** | | | | |
| **14** | **ໂຄງການ 100** | **110** | **110** | | | | | |
| **15** | **ນັກສຶກສາລາວຮຽນເກັ່ງ ຢູ່ສສ ຫວຽດນາມ** | **12** | | **12** | | | | |
| **16** | **ນັກສຶກສາປີ ພະແນກພາສາຫວຽດ ມຊ** | **27** | | | | **27** | **ນັກສຶກສາ** | **1 ປີຮຽນ** |
| **17** | **ອົບຮົມຄູສອນພາສາຫວຽດ** | **20** | | | | **20** | **ພະນັກງານ** | **3 ເດືອນ** |
| | **ລວມ** | **1246** | **453** | **268** | **37** | **488** | | |

**I. ຂົງເຂດການປົກຄອງ : 1022 ທຶນ**
**ບໍາລຸງໄລຍະສັ້ນ : 488 ທຶນ**
**ໄລຍະຍາວ: 534 ທຶນ, ໃນນີ້: ປະລິນຍາຕີ : 263 ທຶນ, ປະລິນຍາໂທ: 243 ທຶນ, ປະລິນຍາເອກ: 28 ທຶນ**
**II. ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: 224 ທຶນ**
**ບໍາລຸງໄລຍະສັ້ນ: 0**
**ໄລຍະຍາວ: 224 ທຶນ, ໃນນີ້: ປະລິນຍາຕີ: 190 ທຶນ, ປະລິນຍາໂທ: 25 ທຶນ, ປະລິນຍາເອກ: 9 ທຶນ**



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn 0989697708

*ສາລະບານເລກ 2*

## ບັນດາກິດຈະການ, ໂຄງການ ທີ່ນຳໃຊ້ທຶນຊ່ວຍເຫຼືອຂອງລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານ ລາວ ປີ 2017

*ຫົວໜ່ວຍຄິດໄລ: ລ້ານດົ່ງຫວຽດນາມ*

| ລ/ດ | ກິດຈະການ, ໂຄງການ | ໄລຍະ ປະຕິບັດ | ມູນຄ່າ ໂຄງການ | ທຶນປີ 2016 ທີ່ຍັງບໍ່ທັນ ຈັດສັນ ໂອນ ມາປີ 2017 | ທຶນປີ 2017 | ທຶນລວມ |
|---|---|---|---|---|---|---|
| | **ຈຳນວນທຶນທັງໝົດ** | | | 290,000 | 560,000 | 849,000 |
| ກ | **ກໍ່ສ້າງພະນັກງານ, ນັກສຶກສາລາວ** | 2017 | | 10,700 | 229,300 | 240,000 |
| I | ກໍ່ສ້າງພະນັກງານ, ນັກສຶກສາລາວຢູ່ຫວຽດ ນາມ (ລວມທັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ໄລຍະຍາວ, ໄລຍະສັ້ນ ແລະ ບັນດາທ້ອງຖິ່ນຂອງ ລາວ ຢູ່ເຂດສາມລ່ຽມພັດທະນາສາມປະເທດ CLV) | | | 10,700 | 227,000 | 237,700 |
| II | ສະໜັບສະໜູນກອງປະຊຸມໃຫຍ່ຂອງນັກສຶກສາລາວ ທີ່ຮຽນຢູ່ຫວຽດນາມ | | | 0 | 300 | 300 |
| III | ຊ່ວຍໜູນບຳລຸງພາສາຫວຽດຢູ່ລາວ ໃຫ້ແກ່ນັກສຶກສາ ລາວ ທີ່ໄດ້ຮັບການຄັດເລືອກສົ່ງໄປຮຽນຫວຽດນາມ | | | 0 | 2,000 | 2,000 |
| ຂ | **ບັນດາກິດຈະການ, ໂຄງການ** | | | 178,800 | 305,141 | 483,941 |
| I | ບັນດາໂຄງການຊຳລະຊາດຕິດ ແລະປະຕິບັດສຳເລັດ[1]. | | | 16,170 | 92,641 | 108,811 |
| 1 | ໂຄງການກໍ່ສ້າງຫໍ່ບ້ານມິດຕະພາບຊາຍແດນລາວ-ຫວຽດນາມ ທີ່ເມືອງຄຳເກີດ, ແຂວງບໍລິຄຳໄຊ | 2013-2015 | 75,264 | 3,805 | 0 | 3,805 |
| 2 | ໂຄງການກໍ່ສ້າງສູນບໍລິການເຕັກນິກກະສິກຳ ແຂວງຊຽງຂວາງ | 2014-2015 | 35,163 | 1,963 | 0 | 1,963 |
| 3 | ໂຄງການກໍ່ສ້າງດ່ານກວດກາຊາຍແດນດາກຕາອອກ, ເມືອງດາກຈຶງ, ແຂວງເຊກອງ | 2014-2015 | 49,649 | 2,549 | 0 | 2,549 |
| 4 | ໂຄງການປະກອບເພີ່ມເຕີມໂຕະ-ຕັ່ງ ໃຫ້ແກ່ສະຖາບັນການ ເມືອງ-ການປົກຄອງແຫ່ງຊາດລາວ | 2015-2016 | 6,653 | 353 | 0 | 353 |
| 5 | ໂຄງການສຳຫລວດແຮ່ທາດ ແລະສ້າງແຜນທີ່ທໍລະນີສາດ ມາດຕາສ່ວນ 1/200.000 ຕອນເໜືອວຽງຈັນ-ໃຕ້ຫລວງພະບາງ | 2013-2017 | 69,900 | 7,500 | 0 | 7,500 |
| 6 | ໂຄງການສ້າງຖານຂໍ້ມູນຂ່າວສານພູມສັນຖານ ຮັບໃຊ້ ການພັດທະນາ ເສດຖະກິດ-ສັງຄົມ ແລະຕິດຕາມ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ຢູ່ ສປປ ລາວ | 2013-2017 | 183,800 | 0 | 22,800 | 22,800 |



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn

| ລ/ດ | ກິດຈະການ, ໂຄງການ | ໄລຍະ ປະຕິບັດ | ມູນຄ່າ ໂຄງການ | ທຶນປີ 2016 ທີ່ຍັງບໍ່ທັນ ຈັດສັນ ໂອນ ມາປີ 2017 | ທຶນປີ 2017 | ທຶນລວມ |
|---|---|---|---|---|---|---|
| 7 | ໂຄງການກໍ່ສ້າງສູນບໍາລຸງສ້າງພະນັກງານຄຸ້ມຄອງ ວິທະຍາສາດ ແລະເຕັກໂນໂລຊີຂອງລາວ | 2014-2017 | 89,887 | 0 | 29,687 | 29,687 |
| 8 | ເພີ່ມທະວີຄວາມສາມາດໃນການຄົ້ນຄ້ວາ ວິທະຍາສາດ ແລະ ຜັນຂະຫຍາຍເຕັກໂນໂລຊີ ໃຫ້ ແກ່ສະຖາບັນວິທະຍາສາດແຫ່ງຊາດລາວ ໄລຍະ 2014-2016 | 2015-2017 | 63,000 | 0 | 32,500 | 32,500 |
| 9 | ໂຄງການສຶກສາຄວາມເປັນໄປໄດ້ເສັ້ນທາງດ່ວນ ວຽງ ຈັນ-ຮ່າໂນ້ຍ | 2016-2017 | 5,600 | 0 | 5,100 | 5,100 |
| 10 | ໂຄງການກໍ່ສ້າງໂຮງຮຽນມັດທະຍົມສົມບູນວຽງພູຄາ, ແຂວງຫລວງນໍ້າທາ | 2013-2015 | 74,867 | 0 | 2,554 | 2,554 |
| II | **ບັນດາໂຄງການສືບຕໍ່[2].** | | | **162,630** | **210,000** | **372,630** |
| 1 | ໂຄງການກໍ່ສ້າງໂຮງຮຽນມັດທະຍົມສົມບູນມິດຕະພາບ ອານຸວົງ ຢູ່ແຂວງໄຊສົມບູນ | 2017-2018 | 88,678 | 40,000 | 0 | 40,000 |
| 2 | ໂຄງການກໍ່ສ້າງສູນບໍລິການເຕັກນິກກະສິກໍາ ແຂວງ ຫົວພັນ | 2016-2018 | 39,352 | 0 | 15,000 | 15,000 |
| 3 | ໂຄງການກໍ່ສ້າງສະຖີວິທະຍຸ-ໂທລະພາບ ຢູ່ແຂວງ ສະຫວັນນະເຂດ | 2016-2018 | 115,795 | 0 | 20,000 | 20,000 |
| 4 | ໂຄງການກໍ່ສ້າງໂຮງໝໍມິດຕະພາບ ຢູ່ແຂວງຊຽງຂວາງ | 2017- | | 40,000 | 20,000 | 60,000 |
| 5 | ໂຄງການກໍ່ສ້າງໂຮງໝໍມິດຕະພາບ ຢູ່ແຂວງຫົວພັນ | 2017- | | 40,000 | 20,000 | 60,000 |
| 6 | ໂຄງການກໍ່ສ້າງລະບົບຊົນລະປະທານເມືອງໜອງບົກ, ແຂວງ ຄໍາມ່ວນ (ລວມທັງຖົມເຈື່ອນ) | 2017- | | 20,000 | 10,000 | 30,000 |
| 7 | ບູລະນະສ້ອມແປງຫໍພັກນັກສຶກສາຕ່າງປະເທດ ຢູ່ ມະຫາ ວິທະຍາໄລແຫ່ງຊາດ. | 2017- | | 5,000 | 10,000 | 15,000 |
| 8 | ໂຄງການກໍ່ສ້າງໂຮງຮຽນມັດທະຍົມສົມບູນ ມິດຕະພາບ ລາວ-ຫວຽດ ຢູ່ແຂວງສະຫວັນນະເຂດ | 2017- | | 1,000 | 10,000 | 11,000 |
| 9 | ໂຄງການກໍ່ສ້າງຂົວສະເອີດ, ດ່ານຊາຍແດນ ແດນ ສະຫວັນ-ລາວບາວ | 2017- | | 5,130 | 10,000 | 15,130 |
| 10 | ໂຄງການແປປຶ້ມ "ປັດນິພົນປະທານໂຮ່ຈິມິນ" ຈາກ ພາສາຫວຽດ ເປັນພາສາລາວ | 2017- | | 1,000 | 5,000 | 6,000 |
| 11 | ໂຄງການກໍ່ສ້າງສະຖານີຖ່າຍທອດວິທະຍຸ-ໂທລະພາບ ຢູ່ແຂວງ ໄຊສົມບູນ | 2017- | | 10,000 | 5,000 | 15,000 |
| 12 | ໂຄງການກໍ່ສ້າງໂຮງຮຽນມັດທະຍົມສົມບູນ ຢູ່ເທດ ສະບານເມືອງບຸນເໜືອ ແຂວງຜົ້ງສາລີ | 2017- | | 0 | 10,000 | 10,000 |
| 13 | ໂຄງການຍົກລະດັບ ແລະ ບູລະນະຊົນລະປະທານ ນໍ້າລ້ອງ, ເມືອງສົບເບົາ, ແຂວງຫົວພັນ | 2017- | | 500 | 5,000 | 5,500 |



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn 09869708

| ລ/ດ | ກິດຈະການ, ໂຄງການ | ໄລຍະ ປະຕິບັດ | ມູນຄ່າ ໂຄງການ | ທີ່ຍັງບໍ່ທັນ ຈັດສັນ ໂອນ ມາປີ 2017 | ທຶນປີ 2017 | ທຶນລວມ |
|---|---|---|---|---|---|---|
| 14 | ໂຄງການກໍ່ສ້າງສະຖານີຖ່າຍທອດວິທະຍຸ-ໂທລະພາບ ຢູ່ແຂວງ ບໍ່ແກ້ວ | 2017- | | 0 | 10,000 | 10,000 |
| 15 | ໂຄງການກໍ່ສ້າງໂຮງຮຽນວິຊາຊີບແຂວງບໍ່ແກ້ວ ໄລຍະ 2 | 2017- | | 0 | 10,000 | 10,000 |
| 16 | ໂຄງການກໍ່ສ້າງໂຮງຮຽນມັດທະຍົມສົມບູນມິດຕະພາບ ລາວ-ຫວຽດ ໄລຍະ 2 | 2017- | | 0 | 5,000 | 5,000 |
| 17 | ໂຄງການສ້າງແຜນແມ່ບົດຊົນລະປະທານ ຢູ່ ແຂວງ ຫົວພັນ ແລະ ຊຽງຂວາງ | 2017- | | 0 | 5,000 | 5,000 |
| 18 | ໂຄງການກໍ່ສ້າງສູນພາສາຫວຽດ ຢູ່ມະຫາວິທະຍາໄລ ສຸພານຸວົງ ແລະ ມະຫາວິທະຍາໄລ ຈຳປາສັກ. | 2017- | | 0 | 5,000 | 5,000 |
| 19 | ໂຄງການແບ່ງເຂດຜະລິດກະສິກຳຢູ່ແຂວງຫົວພັນ, ຊຽງຂວາງ | 2017- | | 0 | 5,000 | 5,000 |
| 20 | ໂຄງການກໍ່ສ້າງສະຖາບັນເສດຖະກິດ-ການເງິນດົງ ກຳ ຊ້ຽງ ໄລຍະ 3 | 2017- | | 0 | 10,000 | 10,000 |
| 21 | ໂຄງການສ່ອຍໜູນສະຖາບັນຍຸຕິທຳລາວ | 2017- | | | 5,000 | 5,000 |
| 22 | ໂຄງການສ້ອມແປງ ຈັກສູບນ້ຳຂອງໜ່ວຍ ຢູ່ ຊົນລະປະທານດົງໂພສີ ແລະ ທ່າພະ-ໜອງພົງ | 2017- | | | 5,000 | 5,000 |
| 23 | ໂຄງການກໍ່ສ້າງສຳນັກງານຄະນະກຳມະການຮ່ວມມື ລາວ-ຫວຽດນາມ (ໂຄງການມິດຕະພາບ) | 2017- | | | 10,000 | 10,000 |
| **III** | **ບັນດາໂຄງການໃໝ່** | **2017-** | | | **2,500** | **2,500** |
| 1 | ໂຄງການກໍ່ສ້າງໂຮງຮຽນພອນສະຫວັນ ຢູ່ຫາດລະບານ ໄພບລະຫວັນ, ແຂວງຊຽງຂວາງ | | | | 500 | 500 |
| 2 | ໂຄງການປັບປຸງ, ຍົກລະດັບ ໂຮງໝໍແຂວງໄຊສົມບູນ | | | | 500 | 500 |
| 3 | ໂຄງການກໍ່ສ້າງໂຮງຮຽນທະຫານ ແຂວງໄຊສົມບູນ | | | | 500 | 500 |
| 4 | ໂຄງການກໍ່ສ້າງລະບົບຊົນລະປະທານ ຂະໜາດນ້ອຍ 04 ແຫ່ງ ຢູ່ 04 ບ້ານ ຂອງສອງເມືອງ (ອະນຸວົງ ແລະ ທ່າໂທມ), ແຂວງໄຊສົມບູນ | | | | 500 | 500 |
| 5 | ສ້າງບົດສຶກສາຄວາມເປັນໄປໄດ້ ໂຄງການຍົກລະດັບ ເສັ້ນທາງ 18 B | | | | 500 | 500 |
| 6 | ສ້າງບົດສຶກສາຄວາມເປັນໄປໄດ້ ໂຄງການທະລຸ ແລະ ກໍ່ສ້າງເສັ້ນທາງ ແຕ່ແຂວງໄຊສົມບູນ-ເຕເຕ-ພູກ່ອງ ເຂົ້າ- ຊໍາທໍ້ປ່າຄົງ | | | | 500 | 500 |
| 7 | ສ້າງບົດສຶກສາຄວາມເປັນໄປໄດ້ ໂຄງການທະລຸ ແລະ ກໍ່ສ້າງເສັ້ນທາງ ແຕ່ບ້ານປຸງທ່າ-ລວງແມ່ນ້ຳທາງມາ-ບ້ານ ເພບລີ | | | | 500 | 500 |



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn
09869708

| ລ/ດ | ກິດຈະກຳ, ໂຄງການ | ໄລຍະ ປະຕິບັດ | ມູນຄ່າ ໂຄງການ | ທຶນປີ 2016 ທີ່ຍັງບໍ່ທັນ ຈັດສັນ ໂອນ ມາປີ 2017 | ທຶນປີ 2017 | ທຶນລວມ |
|---|---|---|---|---|---|---|
| ຄ | ຊ່ອງທຶນ ຍັງບໍ່ໄດ້ຈັດສັນ[3] | | | 100,500 | 24,559 | 125,059 |

ໝາຍເຫດ:

(1): ແຈ້ງແຜນທຶນ ຕາມຜົນການກວດກາຮັບຮອງ ແລະມອບ-ຮັບ.

(2): ຈະຈັດສັນທຶນໃຫ້ ກໍ່ຕໍ່ເມື່ອໂຄງການໄດ້ຖືກຮັບຮອງ ຕາມລະບຽບການ.

(3): ຝ່າຍລາວ ມອບສິດໃຫ້ຝ່າຍຫວຽດນາມ ດຳເນີນຈັດສັນຊ່ອງທຶນດັ່ງກ່າວ ແກ່ບັນດາໂຄງການ ແລະແຈ້ງໃຫ້ແກ່ຝ່າຍລາວຮັບຊາບ.



LawSoft * Tel: +84-8-3930 3279 * www.ThuVienPhapLuat.vn
09869708